ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການແຂວງສາລະວັນ

ເລກທີ..12.../ຈຂ.ສວ

ສາລະວັນ, ວັນທີ..27..4..2022

# ແຈ້ງການ

ເຖິງ: - ທ່ານ ຫົວໜ້າ ກອງບັນຊາການທະຫານ ແຂວງສາລະວັນ.

- ທ່ານ ຫົວໜ້າ ກອງບັນຊາການ ປກສ ແຂວງສາລະວັນ.
- ທ່ານ ຫົວໜ້າ ພະແນກການເງິນ ແຂວງສາລະວັນ.
- ທ່ານ ຫົວໜ້າ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ.
- ທ່ານ ຫົວໜ້າ ພະແນກສາທາລະນະສຸກແຂວງ.
- ທ່ານ ຫົວໜ້າ ພະແນກກະສິກຳ ແລະ ປ່າໄມ້ແຂວງ.
- ທ່ານ ຫົວໜ້າ ພະແນກການຕ່າງປະເທດແຂວງ.
- ທ່ານ ເຈົ້າເມືອງລະຄອນເພັງ.

ເລື່ອງ: ແຈ້ງການເປີດດ່ານທ້ອງຖິ່ນປາກຕະພານ ເມືອງລະຄອນເພັງ ແຂວງສາລະວັນ.

- ອີງຕາມ ໜັງສືທາງລັດຖະການ ຂອງຫ້ອງການກະຊວງການຕ່າງປະເທດ ສະບັບເລກທີ 452/ຫກ.ຫຄຊ.4, ລົງວັນທີ 14 ກຸມພາ 2022.
- ອີງຕາມ ການຕົກລົງເຫັນດີເປັນເອກະພາບພາຍໃນກອງປະຊຸມປຶກສາຫລືກ່ຽວກັບການກະກຽມຄວາມພ້ອມ ເພື່ອເປີດດ່ານທ້ອງຖິ່ນປາກຕະພານ ເມືອງລະຄອນເພັງ, ຄັ້ງວັນທີ 17 ມີນາ 2022.

ປະທານຄະນະກຳມະການຊາຍແດນຂັ້ນແຂວງ ອອກແຈ້ງການດັ່ງນີ້:

1. ເພື່ອເປີດຄືນດ່ານທ້ອງຖິ່ນປາກຕະພານ ເມືອງລະຄອນເພັງ ແຂວງສາລະວັນ ເພື່ອສົ່ງອອກ ແລະ ນຳເຂົ້າສິນຄ້າຕາມລະບຽບການ ເຫັນດີໃຫ້ດ່ານທ້ອງຖິ່ນປາກຕະພານ ແລະ ດ່ານປາກແຊງ ນຳເຂົ້າ-ສົ່ງອອກສິນຄ້າໄດ້.
2. ໃຫ້ອົງການປົກຄອງເມືອງລະຄອນເພັງ ແລະ ພະແນກການທີ່ກ່ຽວຂ້ອງຂັ້ນແຂວງ ລາຍງານຄວາມພ້ອມໃນການເປີດດ່ານ ມາເປັນລາຍລັກອັກສອນຕໍ່ອົງການປົກຄອງແຂວງ ຮັບຊາບ ແລ້ວສາມາດເປີດດ່ານໃນຄວາມຮັບຜິດຊອບຂອງຕົນ ເພື່ອບໍລິການສົ່ງອອກ-ນຳເຂົ້າສິນຄ້າ ພ້ອມທັງລາຍງານສະພາບການໃຫ້ອົງການປົກຄອງແຂວງຮັບຊາບ ເມື່ອເຫັນວ່າມີສະພາບຄວາມສ່ຽງ ຫຼື ປະກົດການຫຍໍ້ທໍ້ເກີດຂຶ້ນ.
3. ໃຫ້ກອງບັນຊາການທະຫານແຂວງ ແລະ ກອງບັນຊາການ ປກສ ແຂວງ ແລະ ເມືອງລະຄອນເພັງ ເປັນເຈົ້າການຕິດຕາມກວດກາ ສາລະເວ ເພື່ອປ້ອງກັນ ແລະ ຮັກສາຄວາມສະຫງົບຕາມແລວຊາຍແດນ ແລະ ລຳແມ່ນ້ຳຂອງຕາມຄວາມຮັບຜິດຊອບຂອງຕົນ.
4. ໃຫ້ພະແນກ ແລະ ພາກສ່ວນຕ່າງໆໃນທົ່ວແຂວງສາລະວັນ ທີ່ມີສ່ວນພົວພັນກັບກິດຈະການສົ່ງອອກ-ນຳເຂົ້າ

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດດ້ວຍ.

**ຮອງເຈົ້າແຂວງສາລະວັນ**

(ປະທານຄະນະກຳມະການຊາຍແດນຂັ້ນແຂວງ)

ແຂວງ ສາລະວັນ

ພູທົງ ຄຳມະນີວົງ

CamScanner